# ໂຢຮັນ

ໃຈຄວາມສຳຄັນ : ສະພາບເປັນພຣະເຈົ້າຂອງພຣະເຢຊູ ໒໐:໓໑

ຈຳນວນບົດ: ໒໑ ບົດ ຂ່າວປະເສີດຕາມທ່ານໂຢຮັນນີ້ໄດ້ບອກໃຫ້ພວກເຮົາຮູ້ຈັກສະພາບຂອງພຣະເຢຊູ (໒໐:໓໑) ແລະຍັງບອກໃຫ້ຮູ້ຈັກເຖິງທາງເຂົ້າໄປເຖິງບ່ອນບໍຣິສຸດດີດ້ວຍພຣະເຢຊູນັ້ນ ບົດ ໑໔: ໖–໗

## ວ່າດ້ວຍຜູ້ແຕ່ງ:

໑. ທ່ານໂຢຮັນເປັນຄົນແນວໃດ?

ທ່ານໂຢຮັນກໍເປັນຄົນນຶ່ງໃນພວກສາວົກ ໑໒ ຄົນນັ້ນ ແລະມີຄຳຂຽນໄວ້ກ່ຽວກັບເພິ່ນວ່າ "ເປັນອັຄສາວົກທີ່ພຣະເຢຊູຊົງຮັກແພງ" (໑໓:໒໓; ໑໙:໒໖; ໒໑:໒໐) ທ່ານໂຢຮັນຜູ້ຂຽນໜັງສືນີ້ບໍ່ໄດ້ຂຽນອອກຊື່ຕົນເອງຈັກເທື່ອ ແຕ່ເພິ່ນຊອບເອີ້ນຕົນເອງວ່າ "ສາວົກ ທີ່ພຣະເຢຊູຊົງຮັກ" ເພິ່ນເປັນຜູ້ທີ່ສນິດຕິດຕາມແລະໃກ້ຊິດພຣະເຢຊູທີ່ສຸດຈົນບາງຄັ້ງໄດ້ນັ່ງອີງໃສ່ຂອງເອິກຂອງພຣະອົງ (໑໓:໒໕) ເວລາພຣະ-ເຢຊູຊົງຖືກຄຶງໄວ້ເທິງໄມ້ກາງແຂນ ທ່ານໂຢຮັນກໍໄດ້ຢູ່ທີ່ນັ້ນດ້ວຍ (໑໙:໒໖) ແລະໃນຄາວທີ່ສາວົກສອງຄົນໄດ້ຕາມພຣະເຢຊູໄປຄັ້ງແຣກນັ້ນ ຜູ້ທີສອງກໍຄົງຈະແມ່ນທ່ານໂຢຮັນນີ້ເອງ (໑:໔໐–໔໑)

໒. ໄດ້ແຕ່ງໜັງສືຂ່າວປະເສີດເຫລັ້ມນີ້ເມື່ອໃດ?

ທ່ານໂຢຮັນໄດ້ແຕ່ງໜັງສືນີ້ເມື່ອອາຍຸແກ່ແລ້ວ ໄດ້ແຕ່ງໃນສະໄໝທີ່ເພື່ອນຝູງເປັນສາວົກດ້ວຍກັນເສັຍຊີວິດໝົດແລ້ວ ພວກເຮົາເຂົ້າໃຈວ່າເລີ່ມໄດ້ແຕ່ງໜັງສືເຣື່ອງນີ້ທີ່ເມືອງເອເຟດໃນຣະຫວ່າງ ປີ ຄ.ສ. ໘໕ ເຖິງ ຄ.ສ. ໙໐.

## ວ່າດ້ວຍຄວາມປະສົງຂອງຜູ້ແຕ່ງ

ຄວາມປະສົງ ຂອງທ່ານ ໂຢຮັນທີ່ ໄດ້ແຕ່ງໜັງສືນີ້ກໍ ມີປາກົດ ຢູ່ໃນບົດທີ ໒໐:໓໑ ແລ້ວວ່າ:

ກ. ເພື່ອໃຫ້ຄົນທັງຫລາຍເຊື່ອວ່າພຣະເຢຊູເປັນພຣະເຈົ້າ

ຂ. ເພື່ອໃຫ້ຜູ້ທີ່ເຊື່ອນັ້ນ ໄດ້ຊີວິດດ້ວຍພຣະອົງເອງ

ເພາະໃນຄາວນັ້ນມີຄົນຈຳນວນຫລວງຫລາຍທີ່ບໍ່ເຊື່ອວ່າ ພຣະເຢຊູເປັນສອງຝ່າຍຄື: ຝ່າຍພຣະເຈົ້າແລະຝ່າຍມະນຸດ ເຂົາຖືແຕ່ພຽງວ່າ ພຣະອົງຊົງເປັນແຕ່ຝ່າຍມະນຸດເທົ່ານັ້ນ ສະນັ້ນທ່ານໂຢຮັນຈຶ່ງເຣີ່ມຂຽນວ່າ "ພຣະທັມນັ້ນໄດ້ມີຢູ່ກ່ອນແລ້ວຕັ້ງແຕ່ດັ້ງເດີມ ພຣະທັມນັ້ນເປັນພຣະເຈົ້າ"

## ວ່າດ້ວຍຜູ້ຮັບ:

ເຮົາຮູ້ແລ້ວວ່າໜັງສືມັດທາຍໄດ້ຂຽນສຳລັບພວກຢູດາ ໜັງສືມາຣະໂກແລະໜັງສືລູກາສຳລັບພວກຕ່າງປະເທດ ຄືພວກໂຣມແລະພວກເຣເລັນ ແຕ່ຂອງທ່ານ ໂຢຮັນໄດ້ຂຽນ ສຳລັບພວກທີ່ ເຊື່ອແລ້ວຄື ທັງພວກຢູດາແລະທັງພວກຕ່າງປະເທດ ດັ່ງນັ້ນທ່ານໂຢຮັນຈຶ່ງບໍ່ໄດ້ແຕ່ງເຣື່ອງ

ພຣະເຢຊູໄປຕາມລຳດັບດັ່ງທ່ານລູກາ ແຕ່ໄດ້ແຕ່ງໄປຕາມຄວາມປະສົງຂອງຜູ້ອ່ານທັງຫລາຍ.

## ວ່າດ້ວຍເນື້ອຄວາມ :

ເຣື່ອງປະສູດແລະເຣື່ອງປະຖົມໄວ ຂອງພຣະເຢຊູ ບໍ່ມີຢູ່ໃນໜັງສືນີ້ ແລະການຮັບສິນບັບເຕມາພ້ອມທັງການທີ່ພຣະອົງຖືກທົດລອງກໍບໍ່ມີເໝືອນກັນ ແຕ່ວ່າທ່ານໂຢຮັນໄດ້ຂຽນສະແດງຄວາມເປັນພຣະເຈົ້າຂອງພຣະເຢຊູ ແລະວ່າພຣະອົງຊົງເປັນຜູ້ສ້າງສັບພະສິ່ງທັງປວງ ແລະເປັນຜູ້ຊົງໂຜດໃຫ້ມະນຸດທັງປວງທີ່ເຊື່ອໃນພຣະອົງໄດ້ເປັນລູກຂອງພຣະເຈົ້າ (໑:໓, ໑໒)

## ວ່າດ້ວຍຄວາມເຊື່ອ

໑. ກ່ຽວກັບພວກສາວົກ

| | |
|---|---|
| ຕົ້ນເຫດແຫ່ງຄວາມເຊື່ອ | ບົດ ໑:໔໒,໔໖,໕໐ |
| ຄວາມຈະເຣີນຂຶ້ນຂອງຄວາມເຊື່ອ | ບົດ ໖:໖໖–໖໙ |
| ຄວາມເຊື່ອທີ່ບໍ່ສົງໄສ | ບົດ ໑໖:໓໐ |
| ຜູ້ເຊື່ອກໍເປັນພະຍານຝ່າຍພຣະເຢຊູ | ບົດ ໒໑:໒໔–໒໕ |

໒. ເຣື່ອງອາຈານນີໂກເດມ

| | |
|---|---|
| ຍັງບໍ່ມີຄວາມເຊື່ອແຕ່ກຳລັງສົນໃຈ | ບົດ ໓ |
| ມີຄວາມເຊື່ອແລ້ວແຕ່ບໍ່ທັນຫລາຍ | ບົດ ໗:໕໐–໕໓ |
| ໝົດຄວາມຢ້ານແລ້ວ | ບົດ ໑໙:໓໙–໔໑ |

໓. ເລື່ອງຍິງຊາວຊະມາເຣັຍ

ບົດທີ ໔ ນີ້ ກໍເປັນ ບົດ ຮຽນ ອັນດີ ສຳລັບ ພວກ ເຮົາ ຊຶ່ງ ສອນ ໃຫ້ ພິຈາຣະນາເຖິງພຣະປັນຍາຂອງ ພຣະອົງທີ່ຊົງ ໄຂທາງໃຫ້ຍິງນັ້ນເຊື່ອ.

໔:໑໙,໒໕,໒໙

໔. ເລື່ອງຄົນຕາບອດ ບົດ ໙:໑໒,໓໐,໓໓,໓໘

ຄວາມສຳຄັນທີ່ມີຢູ່ໃນໜັງສືນີ້ຄື: ຄວາມເຊື່ອ ແລະຄວາມເປັນ ພະຍານ.

ຄວາມເຊື່ອ ໄດ້ຈົດໄວ້ເຖິງ ໙໘ ເທື່ອ ແລະໃນບົດ ໓:໑໖ ກໍ່ ເປັນຫົວໃຈຄວາມແຫ່ງພຣະຄຳພີທັງໝົດ ສ່ວນໃນບົດ ໒໐:໓໑ ໄດ້ ສະແດງເຖິງຄວາມປະສົງແຫ່ງໜັງສືເຫລັ້ມນີ້.

ຄວາມເປັນພະຍານ ໄດ້ຈົດໄວ້ປະມານ ໕໐ ເທື່ອເປັນຕົ້ນວ່າ ໂຢຮັນບັບຕິໂຕກັບພຣະເຢຊູ ໄດ້ມາເປັນພະຍານເຊັ່ນໃດ ຄົນທີ່ ເຊື່ອທັງຫລາຍຕ້ອງເປັນພະຍານເຊັ່ນນັ້ນເໝືອນກັນ.

ຄວາມບໍ່ເຊື່ອແລະການຂັດຂວາງຕໍ່ຄວາມເຊື່ອ

໑. ໃຈຕຶດທາງດຽວ ບົດ ໕:໑໐–໑໖
໒. ຄວາມຢ້ານກົວ ບົດ ໙:໒໒–໒໓; ໑໒:໔໒
໓. ການສແວງຫາກຽດຕິຍົດຊື່ສຽງ ບົດ ໑໒:໔໓
໔. ໃຈແຂງກະດ້າງເພາະຖືວ່າຕົນມີສາສນາ ບົດ ໘:໓໐–໕໙; ໙:໓໔
໕. ຄວາມອິດສາຣິສຍາ ບົດ ໕:໑໘;໑໒:໑໙; ໑໐:໓໓

໖. ມີໃຈດື້ດຶງ ບົດ ໑໒:໓໗-໔໑

ເໝືອນໜັງສືເຮັບເຣີ ບົດ ໓:໑໔

## ເຣື່ອງທີ່ມີຢູ່ແຕ່ໃນໜັງສືໂຢຮັນເທົ່ານັ້ນ

ຄືເຣື່ອງທີ່ພຣະເຢຊູຊົງສົນທນາກັບຄົນ ໆ ດຽວ ແລະທ່ານໂຢຮັນໄດ້ຈົດຄຳສົນທະນາລະຫວ່າງພຣະເຢຊູກັບບຸກຄົນເຫຼົ່ານີ້ໄວ້ດ້ວຍດີ:

- ເມື່ອພຣະອົງຊົງພົບກັບພວກສາວົກເດີມ ທີ່ແມ່ນ້ຳຢູຣະເດັນ ບົດ ໑:໓໕-໕໑
- ເມື່ອພຣະອົງຊົງສົນທະນາກັບມາດາຂອງພຣະອົງ ບົດ ໒
- ເມື່ອນີໂກເດມໄປຫາພຣະອົງ ບົດ ໓
- ເມື່ອພຣະອົງຊົງພົບກັບຍິງສາວຊາວຊະມາເຣັຍ ບົດ ໔
- ເມື່ອພຣະອົງຊົງຕອບນາງມາທາແລະນາງມາຣີອາ ບົດ ໑໑
- ເມື່ອພຣະອົງຊົງສົນທະນາກັບໂທມາ ບົດ ໒໐:໒໔-໒໙
- ເມື່ອພຣະອົງຊົງແຕ່ງຕັ້ງຊີໂມນເປໂຕ ບົດ ໒໑

ຄຳເທສນາຕອນສຳຄັນຂອງພຣະອົງຄື

- ວ່າດ້ວຍເຂົ້າຈີ່ແຫ່ງຊີວິດ ບົດ ໖
- ວ່າດ້ວຍນ້ຳແຫ່ງຊີວິດ ບົດ ໗:໓໗-໕໒
- ວ່າດ້ວຍໜ້າທີ່ຂອງພຣະອົງ ບົດ ໙
- ວ່າດ້ວຍເມັດເຂົ້າ ບົດ ໑໒:໒໐-໒໗
- ວ່າດ້ວຍຜູ້ເລົ້າໂລມຄືພຣະວິນຍານບໍຣິສຸດ ບົດ ໑໔-໑໖
- ຄຳອ້ອນວອນຂອງມະຫາປະໂລຫິດ ບົດ ໑໗

ທ່ານໂຢຮັນໄດ້ຈົດສະພາບຂອງພຣະເຢຊູໄວ້ດັ່ງຕໍ່ໄປນີ້

- ຊົງເປັນພຣະທັມທີ່ມີຢູ່ຕັ້ງເດີມ ໑:໑
- ເປັນພຣະມະຫາເມຊີອາ ໔:໒໕
- ເປັນເຂົ້າຈີ່ແຫ່ງຊີວິດ ໖:໓໕
- ເປັນສວ່າງຂອງໂລກ ໘:໑໒
- ເປັນປະຕູຂອງຝູງແກະ ໑໐:໗
- ເປັນຜູ້ລ້ຽງທີ່ດີ ໑໐:໑໑
- ຊົງຄືນມາຈາກຕາຍ ໑໑:໒໕
- ເປັນພຣະອາຈານແລະພຣະອົງເຈົ້າ ໑໓:໑໓
- ເປັນຄວາມຈິງແລະເປັນຊີວິດ ໑໔:໖
- ເປັນເຄືອອະງຸນອັນແທ້ຈິງ ໑໕:໑
- ເປັນພຣະມະຫາກະສັດ ໑໘:໓໗
- ເປັນພຣະເຈົ້າຂອງເຮົາ ໒໐:໒໘

ທ່ານໂຢຮັນໄດ້ຈົດເຣື່ອງກົງກັນຂ້າມໄວ້ດັ່ງນີ້

ແຈ້ງກັບມືດ ຊີວິດກັບຄວາມຕາຍ ວິນຍານກັບເນື້ອໜັງ

ຟ້າສວັນກັບແຜ່ນດິນ ຄວາມຈິງກັບຄວາມບໍ່ຈິງ

ຄວາມຮັກກັບຄວາມກຽດຊັງ

ພຣະຄຣິດກັບຊາຕານ ພຣະເຈົ້າກັບໂລກ

## ວ່າດ້ວຍການອັສຈັນ

ໃນໜັງສືນີ້ບໍ່ໄດ້ຈົດຄຳອຸປມາໄວ້  ແຕ່ໄດ້ຈົດການອັສຈັນໄວ້ເຖິງ ໖ ເຣື່ອງຊຶ່ງໃນໜັງສືອື່ນບໍ່ໄດ້ຈົດໄວ້ຄື

| | |
|---|---|
| ນ້ຳກາຍເປັນນ້ຳອາງຸ່ນ | ບົດ ໒:໑-໑໑ |
| ລູກຊາຍຂອງເຈົ້ານາຍຜູ້ນຶ່ງໄດ້ດີໄຂ້ | ບົດ ໔:໔໖-໕໑ |
| ເຣື່ອງຄົນງ່ອຍຢູ່ໃນນ້ຳສະ | ບົດ ໕:໒-໙ |
| ເຣື່ອງຄົນຕາບອດຕັ້ງແຕ່ເກີດມາ | ບົດ ໙:໑-໑໒ |
| ລາຊະໂລຄືນມາຈາກຕາຍ | ບົດ ໑໑:໑-໔໖ |
| ການຈັບປາ | ບົດ ໒໑:໑-໑໓ |

ໃນປຶ້ມໂປຣັມນີ້ ພຣະເຢຊູ ຊົງເຮັດການອັສຈັນ ຫລາຍ ແນວເພື່ອ ສະແດງໃຫ້ພວກເຮົາເຫັນສພາບຂອງພຣະອົງເອງ

## ການແບ່ງເປັນພາກ

ໃນບົດແຣກໜັງສືເຫລັ້ມນີ້ໄດ້ອະທິບາຍເປັນຄຳນຳ ຊຶ່ງມີເຣື່ອງຕໍ່ໄປນີ້ຄື

ກ. ການປາກົດຢູ່ຂອງພຣະທັມ ຂໍ້ ໑-໕

ຂ. ການເປີດເຜີຍແສງສວ່າງຂອງພຣະເຈົ້າ ຂໍ້ ໖-໑໓

ຄ. ການສະແດງຄວາມຮັກຂອງພຣະເຈົ້າ ຂໍ້ ໑໔-໑໘

### ພາກທີ ໑ ພຣະເຈົ້າຊົງສະແດງໃຫ້ພຣະເຢຊູເປັນ ຊີວິດຂອງມະນຸສໂລກ ບົດ ໑:໑໙-໑໒:໕໐

ກ. ວ່າດ້ວຍການປະກອດຊີວິດນັ້ນ ບົດ ໑:໑໙-໔:໔໒

ຂ. ວ່າດ້ວຍການຍອມເຫັນແລະການ
ຮັບເອົາຊີວິດນັ້ນ ບົດ ໔:໔໓-໔:໕໔

ຄ. ວ່າດ້ວຍການບໍ່ຍອມເຫັນແລະການ
ບໍ່ຍອມຮັບເອົາຊີວິດນັ້ນ ບົດ ໕:໑-໑໒:໕໐

ພາກທີ ໖ ພຣະເຈົ້າຊົງສະແດງໃຫ້ ພຣະເຢຊູເປັນ
ແສງສວ່າງຂອງພວກສາວົກ ບົດ ໑໓-໑໗

ກ. ວ່າດ້ວຍແສງສວ່າງທີ່ນຳໄປສູ່ຄວາມຮັກ
ບົດ ໑໓:໑-໓໐

ຂ. ວ່າດ້ວຍແສງສວ່າງທີ່ພຣະອົງຢາກໃຫ້ຮັບເອົາ
ບົດ ໑໓:໓໑-໑໖:໓໓

ຄ. ວ່າດ້ວຍການທູນຂໍເອົາແສງສວ່າງນັ້ນ ບົດ ໑໗

ພາກທີ ໗ ພຣະເຈົ້າຊົງສະແດງວ່າ ພຣະເຢຊູເປັນ
ຄວາມຮັກຂອງພຣະອົງ ບົດ ໑໘-໒໐

ກ. ວ່າດ້ວຍການທົດລອງເບິ່ງຄວາມຮັກ
ບົດ ໑໘:໑-໑໙:໑໖

ຂ. ວ່າດ້ວຍເມື່ອຄວາມຮັກສຳເຣັດ ບົດ ໑໙:໑໗-໔໒

ຄ. ວ່າດ້ວຍໄຊຊະນະຂອງຄວາມຮັກ ບົດ ໒໐

ຄຳສຸດທ້າຍ ຄຳສັ່ງແກ່ທ່ານເປໂຕ ບົດ ໒໑

# ການຈັດເປັນບົດ


ບົດທີ ໑ ພຣະທັມເປັນເນື້ອໜັງ

ບົດທີ ໒ ການວິວາຫະທີ່ບ້ານການາ

ບົດທີ ໓ ເຣື່ອງນີໂກເດໂມ

ບົດທີ ໔ ເຣື່ອງຍິງສາວຊາວຊະມາເຣັຍ

ບົດທີ ໕ ເຣື່ອງຄົນປ່ວຍ

ບົດທີ ໖ ເຣື່ອງເຂົ້າຈີ່ແຫ່ງຊີວິດ

ບົດທີ ໗ ເຣື່ອງເທສການຕັ້ງທັບອາໄສ

ບົດທີ ໘ ເຣື່ອງພຣະເຢຊູເປັນແສງສວ່າງຂອງໂລກ

ບົດທີ ໙ ເຣື່ອງຄົນຕາບອດ

ບົດທີ ໑໐ ເຣື່ອງຜູ້ລ້ຽງອັນດີ

ບົດທີ ໑໑ ການຄືນມາຈາກຕາຍຂອງລາຊະໂຣ

ບົດທີ ໑໒ ເຣື່ອງເມັດເຂົ້າ

ບົດທີ ໑໓ ການລ້າງຕີນ

ບົດທີ ໑໔ ເຣື່ອງຢ່າໃຫ້ໃຈວຸ້ນວາຍ

ບົດທີ ໑໕ ເຣື່ອງເຄືອອະງຸ່ນທີ່ແທ້ຈິງ

ບົດທີ ໑໖ ເຣື່ອງຜູ້ເລົ້າໂລມ

ບົດທີ ໑໗ ຄວາມອ້ອນວອນຂອງພຣະເຢຊູ

ບົດທີ ໑໘ ພຣະເຢຊູຖືກຈັບ

ບົດທີ ໑໙ ການຄຶງໄວ້ທີ່ໄມ້ກາງແຂນ

ບົດທີ ໒໐ ພຣະເຢຊູຊົງຄືນມາຈາກຕາຍ

ບົດທີ ໒໑ ພຣະເຢຊູຊົງປາກົດໃຫ້ເຫັນ